ທ່ານ ສົມພອນ ແສງສຸລິຈັນ ເລຂາທິການ ສພຂ ສາລະວັນ ໄດ້ຜ່ານຮ່າງບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳເດືອນມັງກອນ 2022 ແລະ ທິດທາງແຜນການປະຈຳເດືອນກຸມພາ 2022 ເຊິ່ງໄລຍະຜ່ານມາຄະນະປະຈຳ ສພຂ ສາລະວັນ ໄດ້ເອົາໃຈໃສ່ຊີ້ນຳ-ນຳພາການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນດ້ວຍຄວາມຮັບຜິດຊອບສູງ ໂດຍລວມແມ່ນມີຜົນສຳເລັດຫລາຍດ້ານ ເປັນຕົ້ນແມ່ນດ້ານນິຕິກຳໃຕ້ກົດໝາຍ ໄດ້ສຳເລັດການເປີດກອງປະຊຸມທາບທາມປັບປຸງຮ່າງນິຕິກຳໃຕ້ກົດໝາຍ "ຂໍ້ຕົກລົງວ່າດ້ວຍການຕ້ານ, ສະກັດກັ້ນ ແລະ ແກ້ໄຂຢາເສບຕິດຢູ່ແຂວງສາລະວັນ" ໂດຍການປະສານສົມທົບ ແລະ ຊຸກຍູ້ອົງການພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າຮ່າງນິຕິກຳໃຕ້ກົດໝາຍດັ່ງກ່າວ ທີ່ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ສາລະວັນ ຊຸດທີ II ເພື່ອສາມາດປະກາດໃຊ້ທົ່ວແຂວງ; ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ໄດ້ພິຈາລະນາຕົກລົງບັນຫາພື້ນຖານຂອງ

ແຂວງຕາມການສະເໜີຂອງອົງການປົກຄອງແຂວງ ຜ່ານກອງປະຊຸມຂອງຄະນະປະຈຳ ສພຂ; ດ້ານການຕິດຕາມ-ກວດກາ ໄດ້ເຄື່ອນໄຫວຕິດຕາມ-ກວດກາ ສະພາບບັນຫາຂອງໂຄງການເຊື່ອສຳປະທານທີ່ດິນປູກກ້ວຍ ທີ່ບ້ານຫາງພູນ້ອຍ ເມືອງສາລະວັນ; ໄດ້ເປີດກອງປະຊຸມປຶກສາຫາລື ກ່ຽວກັບຄຳຮ້ອງຂໍຄວາມເປັນທຳ ຈຳນວນ 3 ເລື່ອງ ແລະ ຄຳສະເໜີຂອງປະຊາຊົນ ຈຳນວນ 5 ເລື່ອງ; ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ສາລະວັນ ຊຸດທີ II, ໄດ້ເຄື່ອນໄຫວຮ່ວມກັບສະພາການຄ້າ ແລະ ອຸດສາຫະກຳ ມອບເຄື່ອງຊ່ວຍເຫລືອທີ່ລະດົມຈາກບໍລິສັດ, ອົງການຈັດຕັ້ງສັງຄົມ ເປັນຕົ້ນແມ່ນ ອຸປະກອນການແພດ, ເຄື່ອງປ້ອງກັນພະຍາດໂຄວິດ-19, ອຸປະກອນການຮຽນ, ເຄື່ອງນຸ່ງຮົ່ມ, ເຂົ້າສານໝຽວ ແລະ ເຄື່ອງອຸປະໂພກ-ບໍລິໂພກ ຈຳນວນໜຶ່ງ ລວມມູນຄ່າທັງໝົດ 91 ລ້ານກວ່າກີບ ໃນນັ້ນ, ມີການປະກອບສ່ວນຈາກ ສພຂ ມູນຄ່າ 1 ກວ່າລ້ານກີບ ມອບໃຫ້ 3 ເມືອງພູດອຍຄື: ສະໝ້ວຍ, ຕະໂອ້ຍ ແລະ ຕຸ້ມລານ; ສຳລັບວຽກງານທິດທາງແຜນການຕໍ່ໜ້າແມ່ນຈະສືບຕໍ່ປະສານສົມທົບ ແລະ ຊຸກຍູ້ອົງການພາກສ່ວນທີ່ກ່ຽວຂ້ອງ ແລະ ຄະນະກຳມະການ ສພຂ ໃນການຄົ້ນຄວ້າຮ່າງນິຕິກຳໃຕ້ກົດໝາຍ ຂໍ້ຕົກລົງເຈົ້າແຂວງທີ່ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ສາລະວັນ ເພື່ອໃຫ້ສາມາດປະກາດໃຊ້ທົ່ວແຂວງ, ສືບຕໍ່ພິຈາລະນາ ຕົກລົງບັນຫາສຳຄັນຂອງແຂວງ ຕາມການສະເໜີຂອງອົງການປົກຄອງແຂວງ ຜ່ານກອງປະຊຸມຂອງຄະນະປະຈຳ ສພຂ ສາລະວັນ, ກະກຽມເຄື່ອນໄຫວຕິດຕາມກວດກາບັນດາທາງສຽງສັງຄົມ, ປາກົດການຫຍໍ້ທໍ້ຕ່າງໆ ທີ່ຜົ້ນເດັ່ນຕາມການສະເໜີຂອງປະຊາຊົນ ຢູ່ບັນດາເມືອງ; ສືບຕໍ່ເອົາໃຈໃສ່ຕ້ອນຮັບປະຊາຊົນ ແລະ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງໃນການແກ້ໄຂບັນຫາຄຳຮ້ອງທຸກຂອງປະຊາຊົນໃຫ້ວ່ອງໄວ ພ້ອມທັງສອດຄ່ອງກັບລະບຽບ-ກົດໝາຍ.

ພ້ອມນັ້ນ, ກອງປະຊຸມຍັງໄດ້ນຳບັນຫາທີ່ຜົ້ນເດັ່ນ ເຂົ້າມາປຶກສາຄົ້ນຄວ້າໃນກອງປະຊຸມ ໂດຍສະເພາະ ສະພາບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດ, ການຈັດຕັ້ງປະຕິບັດຕ້ານສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19, ສະພາບການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການສຳປະທານ ປູກກ້ວຍຢູ່ບ້ານຫາງພູນ້ອຍ, ບັນຫາຂໍ້ຂັດແຍ່ງລະຫວ່າງປະຊາຊົນ, ສະພາບການຄຸ້ມຄອງການນຳໃຊ້ປ່າຜະລິດທີ່ໄດ້ມີການບຸກລຸກ ແລະ ບັນຫາອື່ນໆ ທີ່ສຳຄັນ ທັງນີ້, ກໍເພື່ອພ້ອມກັນຄົ້ນຄວ້າຊອກຫາທາງແກ້ໄຂຮ່ວມກັນຕາມຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ໃຫ້ມີມາດຕະການ, ມີການຕິດຕາມ-ກວດກາ, ທັນສະພາບການ ແລະ ແກ້ໄຂໃຫ້ສຳເລັດ.

(ດີລຳພົນ ພົມມະຈັນ)

ປະທານຄະນະ ສສຊ ເຂດ 7 ເຄື່ອນໄຫວເຮັດວຽກຢູ່ 3 ເມືອງ

(ສພຊ) ລະຫວ່າງວັນທີ 8-9 ກຸມພາ 2022 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ນຳໂດຍທ່ານ ເພັງນິລັນ ຄຳພັນເພັງ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7 ພ້ອມດ້ວຍຄະນະ ໄດ້ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຜີຍແຜ່ເຊື່ອມຊຶມໃຫ້ແກ່ຜູ້ມີສິດເລືອກຕັ້ງ ຢູ່ເມືອງຄອບ ແລະ ເມືອງຊຽງຮ່ອນ ລວມມີ 10 ຈຸດ ໃນນັ້ນ, ຈຸດສຳນັກງານ-ອົງການອ້ອມຂ້າງເມືອງ ມີ 2 ຈຸດ ແລະ ບ້ານ 8 ຈຸດ; ເຂົ້າຮ່ວມຮັບຟັງມີບັນດາຄະນະນຳຂອງເມືອງ, ພະນັກງານອາວຸໂສບຳນານ; ພະນັກງານຫລັກແຫລ່ງຂອງເມືອງ ຕະຫລອດຮອດອຳນາການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ເຂົ້າຮ່ວມ 900 ກວ່າຄົນ.

ເມືອງຊຽງຮ່ອນ

ການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນຂອງເມືອງ, ບ້ານໃນໄລຍະ 1 ປີຜ່ານມາ ໂດຍສັງເຂບ; ຈາກນັ້ນ, ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ຂອງ ສພຊ ຊຸດທີ IX ໂດຍໄດ້ຍົກໃຫ້ເຫັນບາງເນື້ອໃນມະຕິກອງປະຊຸມ ສພຊ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 9 ເດືອນ ຄາດຄະເນໝົດປີ 2021 ແລະ ທິດທາງແຜນການປະຈຳປີ 2022; ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2020 ແລະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 10 ເດືອນ ຄາດຄະເນປະຕິບັດໝົດປີ 2021 ແລະ ທິດທາງແຜນງົບປະມານແຫ່ງລັດ ປີ 2022; ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາຜົນການກວດສອບບົດສະຫລຸບຂາດຕົວງົບປະມານແຫ່ງລັດ ແລະ ຜົນການກວດສອບປະຈຳປີ 2020, ບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການກວດສອບແຫ່ງລັດ; ຮັບຮອງເອົາບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈຳປີ 2019, ບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງອົງການກວດກາແຫ່ງລັດ; ມະຕິວ່າດ້ວຍການຮັບຮອງເອົາຍຸດທະສາດການພັດທະນາພະລັງງານໄຟຟ້າ ຂອງ ສປປລາວ ປີ 2021-2030; ມະຕິວ່າດ້ວຍການຮັບຮອງເອົາວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040) ຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030) ແລະ ແຜນພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 5 ປີ (2021-2025); ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສານປະຊາຊົນສູງສຸດ; ມະຕິວ່າດ້ວຍ ການຮັບຮອງເອົາການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການປີ 2022 ອົງການໄອຍະການປະຊາຊົນສູງສຸດ; ມະຕິວ່າດ້ວຍການຮັບຮອງເອົາບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງ ສພຊ; ມະຕິວ່າດ້ວຍການຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 11 ສະບັບ; ນອກນີ້, ຍັງໄດ້ນຳເອົາມະຕິກອງປະຊຸມ ປະຈຳປີ 2021 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7 ເປັນຕົ້ນແມ່ນແຜນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຂອງແຂວງໄຊຍະບູລີ ມາເຜີຍແຜ່ເຊື່ອມຊຶມໃຫ້ຜູ້ມີສິດເລືອກຕັ້ງ ໄດ້ຮັບຮູ້. ພ້ອມດຽວກັນ, ຍັງໄດ້ລົງຢ້ຽມຢາມເພື່ອຕິດຕາມຊຸກຍູ້ໂຄງການກໍ່ສ້າງຂົວຂ້າມນ້ຳຂອງກ້ອນຕົ່ນ-ຫ້ວຍແກ້ວ ເມືອງປາກທາ ແຂວງບໍ່ແກ້ວ; ຕິດຕາມສະຖານທີ່ຈະສ້າງທ່າເຮືອບ້ານປາກເປັດ ໃນຕໍ່ໜ້າ; ຢ້ຽມຢາມສະຖານທີ່ສ້າງໂຮງງານແປຮູບຢາພາລາ ຢູ່ເມືອງຊຽງຮ່ອນ ແລະ ມອບອຸປະກອນການຮຽນ ໃຫ້ໂຮງຮຽນ ມສ. ປາກເປັດ ມູນຄ່າ 1,2 ລ້ານກີບ.

ທັງນີ້, ກໍເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາເນື້ອໃນບັນຫາສຳຄັນຕ່າງໆ ທີ່ລັດຖະບານສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ໃຫ້ຖັນແຖວພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າ ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ.

ໃນວັນທີ 10 ກຸມພາ 2022 ຄະນະດັ່ງກ່າວ ໄດ້ສົມທົບກັບສະມາຊິກສະພາປະຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ໄດ້ນຳເອົາເນື້ອໃນຈິດໃຈກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ເຜີຍແຜ່ເຊື່ອມຊຶມໃຫ້ແກ່ຜູ້ມີສິດເລືອກຕັ້ງ ຢູ່ເມືອງເງິນ ລວມມີ 5 ຈຸດ ໃນນັ້ນ, ຈຸດສຳນັກງານ-ອົງການອ້ອມຂ້າງເມືອງ ມີ 1 ຈຸດ ແລະ ບ້ານ 4 ຈຸດ; ເຂົ້າຮ່ວມຮັບຟັງມີຄະນະນຳຂອງເມືອງ, ພະນັກງານອາວຸໂສບຳນານ, ທະຫານ, ຕຳຫລວດ, ພະນັກງານຫລັກແຫລ່ງຂອງເມືອງ ຕະຫລອດຮອດອຳນາການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ເຂົ້າຮ່ວມ 771 ຄົນ ຍິງ 295 ຄົນ.

ການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນຂອງເມືອງ ແລະ ອົງການປົກຄອງບ້ານ ໃນໄລຍະ 1 ປີ ຜ່ານມາໂດຍສັງເຂບ. ຈາກນັ້ນ, ສສຊ ແລະ ສສຂ ໄດ້ຜັດປ່ຽນກັນ ເຜີຍແຜ່ເນື້ອໃນຂອງ 11 ມະຕິ ທີ່ໄດ້ຮັບຮອງເອົາໃນກອງປະຊຸມ ສພຊ; ມະຕິກອງປະຊຸມ ປະຈຳປີ 2021 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ແລະ 7 ມະຕິ ທີ່ໄດ້ຮັບຮອງເອົາໃນກອງປະຊຸມ ສພຂ; ພ້ອມດຽວກັນ, ໄດ້ຍົກໃຫ້ເຫັນລະບົບກົງຈັກການຈັດຕັ້ງຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ສພຂ ທັງເປີດໂອກາດໃຫ້ຜູ້ມີສິດເລືອກຕັ້ງທີ່ເຂົ້າຮ່ວມຮັບຟັງ ໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ສະເໜີຂໍ້ຂັດຂ້ອງໝອງໃຈຕ່າງໆ.

ຕອນທ້າຍ, ປະທານຄະນະ ສສຊ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄະນະພັກ, ອົງການປົກຄອງທຸກຂັ້ນ ທີ່ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານຮອບດ້ານ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມທີ່ ສພຊ; ສພຂ ທີ່ໄດ້ຮັບຮອງເອົາຢ່າງຕັ້ງໜ້າ ຄຽງຄູ່ກັນນັ້ນ, ຍັງໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມຈົ່ງນຳເອົາເນື້ອໃນຈິດໃຈທີ່ນຳມາເຜີຍແຜ່ຄັ້ງນີ້ ໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍເຂົ້າໃນຂອບເຂດວຽກງານທີ່ຮັບຜິດຊອບ; ຫັນເອົາ 2 ວາລະແຫ່ງຊາດ ສອດຫ້ອຍເຂົ້າໃນແຜນການ, ໂຄງການຂອງຂະແໜງການຕົນ; ສ້າງທຸກເງື່ອນໄຂໃຫ້ ສສຂ ປະຈຳເມືອງ ໄດ້ເຄື່ອນໄຫວຕາມຄວາມເໝາະສົມ ແລະ ຮຽກຮ້ອງໃຫ້ຂະແໜງການທີ່ກ່ຽວຂ້ອງກະກຽມນຳເອົາຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໄປທາບທາມຢູ່ທ້ອງຖິ່ນຮາກຖານຢ່າງທົ່ວເຖິງ.

ການເຄື່ອນໄຫວເຮັດວຽກຢູ່ເມືອງເງິນ, ຄະນະຍັງໄດ້ເຄື່ອນໄຫວຕິດຕາມຊຸກຍູ້ໂຄງການຍົກຍ້າຍ, ຈັດສັນບ້ານກົ່ວງົ້ວ ເມືອງເງິນ ທີ່ຖືກຜົນກະທົບຈາກການຂະຫຍາຍເຂດສຳປະທານຂອງໂຮງງານໄຟຟ້າຫົງສາ ອີກດ້ວຍ.

(ນີ່ຕູ່ ປະສົດທິພົງ)

ເມືອງເງິນ

ປະທານ ສພຂ ອຸດົມໄຊ ຮັບຟັງການລາຍງານ ຈາກຜູ້ປະຈຳການສະພາການຄ້າ ແລະ ອຸດສາຫະກຳແຂວງ

(ສພຊ) ຕອນບ່າຍວັນທີ 2 ມັງກອນ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ, ທ່ານ ຄຳດີ ວົງລ້ອມ ປະທານ ສພຂ ອຸດົມໄຊ ໄດ້ຕ້ອນຮັບ ແລະ ຮັບຟັງການລາຍງານຈາກທ່ານ ວິໄສ ອິນດາລາ ຮອງປະທານຜູ້ປະຈຳການ ສະພາການຄ້າ ແລະ ອຸດສາຫະກຳແຂວງອຸດົມໄຊ.

ທ່ານ ວິໄສ ອິນດາລາ ໄດ້ລາຍງານໃຫ້ຊາບ ກ່ຽວກັບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ແລະ ພາລະບົດບາດຂອງສະພາການຄ້າ ແລະ ອຸດສາຫະກຳແຂວງອຸດົມໄຊ ເຊິ່ງແມ່ນອົງການຈັດຕັ້ງສັງຄົມຂອງພາກທຸລະກິດເປັນຂົວຕໍ່ລະຫວ່າງອົງການຂອງລັດ ແລະ ຫົວໜ່ວຍທຸລະກິດ, ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ, ສະມາຄົມເສດຖະກິດ, ກຸ່ມຜູ້ປະກອບການອິດສະຫລະ, ນັກທຸລະກິດວິສາຫະກິດຕ່າງໆທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ໃນແຂວງອຸດົມໄຊ, ສະພາການຄ້າ ແລະ ອຸດສາຫະກຳແຂວງອຸດົມໄຊ ມີພາລະບົດບາດໃນການຊ່ວຍເຫລືອ ພ້ອມທັງປະກອບຄຳຄິດເຫັນໃນຫລາຍຂົງເຂດວຽກງານທັງພາຍໃນ ແລະ ຕ່າງປະເທດ, ປຸກລະດົມຂົນຂວາຍ, ຈັດຕັ້ງເຕົ້າໂຮມນັກທຸລະກິດເພື່ອປະກອບສ່ວນພັດທະນາສິ່ງເສີມດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ລວມທັງປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງວິສາຫະກິດໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ.

ໂອກາດດັ່ງກ່າວ, ທ່ານ ຄຳດີ ວົງລ້ອມ ໄດ້ສະແດງຄວາມຂອບໃຈຜູ້ຕາງໜ້າສະພາການຄ້າ ແລະ ອຸດສາຫະກຳແຂວງອຸດົມໄຊ ໃນການມາເຄື່ອນໄຫວລາຍງານວຽກງານໃນຄັ້ງນີ້ ແລະ ຫວັງວ່າໃນຕໍ່ໜ້າທາງສະພາການຄ້າ ແລະ ອຸດສາຫະກຳແຂວງອຸດົມໄຊ ກັບ ສພຂ ຈະໄດ້ມີການພົວພັນຮ່ວມມືດ້ານໜ້າທີ່ວຽກງານເຊິ່ງກັນແລະກັນໃນຕໍ່ໜ້າຫລາຍຂຶ້ນກວ່າເກົ່າ.

(ແສງພອນ ອິນນະລິງ)

ອົງການກາແດງ ມອບເຄື່ອງຊ່ວຍເຫລືອ ໃຫ້ສະພາປະຊາຊົນແຂວງຫົວພັນ

(ສພຊ) ຕອນບ່າຍວັນທີ 10 ກຸມພາ 2022 ອົງການກາແດງແຂວງຫົວພັນ ໄດ້ນຳເອົາເຄື່ອງຊ່ວຍເຫລືອບັນເທົາທຸກ ມອບໃຫ້ສະພາປະຊາຊົນແຂວງຫົວພັນ ເຊິ່ງປະກອບມີເຄື່ອງນຸ່ງ 30 ຖົງ ແລະ ເກີບ 5 ແກັດ ລວມມູນຄ່າ 12 ລ້ານກີບ; ກ່າວມອບໂດຍທ່ານ ຄຳສີ ຜົວວິໄລ ຫົວໜ້າກາແດງແຂວງຫົວພັນ ແລະ ຕາງໜ້າກ່າວຮັບໂດຍແມ່ນທ່ານຄອນປະພັນ ເລືອງສີຈັນທອງ ຮອງປະທານສະພາປະຊາຊົນແຂວງຫົວພັນ; ມີບັນດາຄະນະປະຈຳ, ຄະນະເລຂາທິການ, ພະນັກງານສະພາປະຊາຊົນແຂວງ ແລະ ພະນັກງານມາຈາກອົງການກາແດງ ເຂົ້າຮ່ວມເປັນສັກຂີພິຍານ.

ໃນໂອກາດນີ້, ທ່ານ ຄອນປະພັນ ເລືອງສີຈັນທອງ ໄດ້ສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈ ອົງການກາແດງລາວ ກໍຄືອົງການກາແດງແຂວງຫົວພັນ ທີ່ໄດ້ໃຫ້ການຊ່ວຍເຫລືອຄັ້ງນີ້ ໂດຍຈະນຳເອົາເຄື່ອງຊ່ວຍເຫລືອດັ່ງກ່າວ ໄປມອບຕໍ່ໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າຜູ້ທີ່ປະສົບເຄາະຮ້າຍ ແລະ ຄອບຄົວທຸກຍາກ ເພື່ອແກ້ໄຂຊີວິດການເປັນ�อยู่ຂອງເຂົາເຈົ້າ ໃຫ້ນັບມື້ດີຂຶ້ນ ແລະ ຫວັງຢ່າງຍິ່ງວ່າ ຕໍ່ໜ້າຍັງຈະໄດ້ຮັບການຊ່ວຍເຫລືອຕື່ມອີກ.

(ນາງ ປຸ້ຍນິຕາ ເພັງມີໄຊ)

ສຸຂະສະບາຍ ຫາຍໄຮຄາ

ສັນຍານເຕືອນທີ່ຄວນຮູ້ ຈາກມະເຮັງເຕົ້ານົມ

ສາວແວ່ນ

ມະເຮັງເຕົ້ານົມ ແມ່ນມະເຮັງທີ່ເກີດຈາກຄວາມຜິດປົກກະຕິຂອງຈຸລັງໃນເຕົ້ານົມ ໂດຍສະເພາະແມ່ນຈຸລັງທໍ່ນ້ຳນົມຈະເລີ່ມແບ່ງອອກຢ່າງຜິດປົກກະຕິ ແລ້ວແຜ່ໄປສູ່ເນື້ອເຍື່ອໃກ້ຄຽງ ຖ້າປະໄວ້ດົນອາດຈະແຜ່ໄປສູ່ຈຸລັງອື່ນໆໃນຮ່າງກາຍຜ່ານທາງທໍ່ນ້ຳເຫລືອງ.

ສັນຍານເຕືອນວ່າອາດຈະເປັນມະເຮັງເຕົ້ານົມ ສາມາດສັງເກດໄດ້ດ້ວຍຕົນເອງ ດັ່ງນີ້:

- ຄຳພໍ້ກ້ອນໃນເຕົ້ານົມ ຫລື ບໍລິເວນຂີ້ແຮ້ ຖ້າໄລຍະທຳອິດຂອງມະເຮັງ ຈັບແຕະຈະບໍ່ຮູ້ສຶກເຈັບແຕ່ບໍ່ຄວນປ່ອຍປະລະເລີຍ ຢ່າຄິດວ່າບໍ່ຮູ້ສຶກເຈັບ ບໍ່ໄດ້ໝາຍຄວາມວ່າຈະບໍ່ແມ່ນມະເຮັງ.
- ເກີດຄວາມປ່ຽນແປງຜິດປົກກະຕິຕ່າງໆເກີດຂຶ້ນຢູ່ໃນເຕົ້ານົມຂ້າງດຽວ.
- ເຕົ້ານົມໃຫຍ່ຂຶ້ນຢ່າງໄວວາ ເລີ່ມຕົ້ນຈາກເບື້ອງໃດເບື້ອງໜຶ່ງ.
- ຮູບຮ່າງຂອງເຕົ້ານົມມີການປ່ຽນແປງບໍ່ຄືກັນ ໂດຍບໍ່ມີການຜ່າຕັດມາກ່ອນ.
- ມີການປ່ຽນແປງຂອງຜິວໜັງເຕົ້ານົມ ເຊັ່ນ: ຜິວໜັງແຂງ ຫລື ໜາ ມີກ້ອນນູນຂຶ້ນ ຫລື ໜາ ມີສີຜິວທີ່ປ່ຽນໄປ, ມີບາດແຜຊຳເຮື້ອ ຫລື ຮອຍຮູຊຸມຂຶ້ນຈະແจ້ງຂຶ້ນຄືກັບເປືອກໝາກກ້ຽງ.
- ມີອາການເຈັບເຕົ້ານົມເບື້ອງໃດເບື້ອງໜຶ່ງ ອາດຈະເປັນພຽງເລັກນ້ອຍ ຫລືຫລາຍ.
- ມີອາການບວມແດງໃນເຕົ້ານົມ ອາດມີອາການເຈັບ ຫລື ເປັນບາດແຜຢູ່ບໍລິເວນທີ່ເປັນບວມແດງນຳອີກ.
- ບໍລິເວນເຕົ້ານົມມີຮອຍຍຸບ ຫລື ຮອຍຫ່ຽວ.
- ມີການເນົ່າຢູ່ຫົວນົມ ຫລື ສ່ວນອື່ນໆຂອງບໍລິເວນເຕົ້ານົມ.
- ຫົວນົມຍຸບເຂົ້າໄປໃນເຕົ້ານົມ ຫລື ບໍ່ສະໝ່ຳສະເໝີ ໂດຍບໍ່ໄດ້ເປັນມາແຕ່ເກີດ ຫລື ຜ່ານການຜ່າຕັດໃດໆ.
- ມີເລືອດ ແລະ/ຫລື ນ້ຳໄຫລອອກ ເຊັ່ນ: ມີນ້ຳເຫລືອງໃສໆ ໄຫລອອກຈາກຫົວນົມ ຫລື ແມ່ຍິງທີ່ບໍ່ມີລູກແຕ່ມີນ້ຳນົມໄຫລອອກມາ ຖືວ່າຜິດປົກກະຕິ ແລະ ເປັນສັນຍານອັນຕະລາຍເຊັ່ນດຽວກັນ.
- ມີບາດແຜຢູ່ຫົວນົມ ເປັນບາດແຜສີແດງ ແລະ ມັກຈະປິ່ນປົວບໍ່ດີ.

ຖ້າທ່ານຫາກມີອາການດັ່ງກ່າວ ຄວນໄປພົບໝໍເພື່ອກວດລະອຽດຕື່ມ ແຕ່ຢ່າຕົກໃຈ ເນື່ອງຈາກອາການບາງຢ່າງ ມັນຍັງບໍ່ທັນເປັນຕົວຊີ້ບອກວ່າເປັນມະເຮັງເຕົ້ານົມ ແຕ່ມັນເປັນອາການທີ່ພົບເລື້ອຍໆ ແລະ ມັກຈະກ່ຽວຂ້ອງກັບມະເຮັງ.

www.praram9.com

ທັກທາຍ ລະບາຍ

ສຽມຫ້ຽນ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຖິ່ງພິທີການ)

❋ **ຕາມ**ຂ່າວໃຫ້ຮູ້ວ່າ: ນັກການ**ປັບຂຶ້ນລາຄານ້ຳມັນເຊື້ອ**ໄຟ**ໃບ**ຂອບເຂດທົ່ວປະເທດ ເຊິ່ງໄດ້ເລີ່ມຈັດຕັ້ງປະຕິບັດໃບອັນທີ 11 ກຸມພາຜ່ານມາ ພາຫະນະແລ່ນລົ້ອ ລຽນລຽບຕາມທາງ ຕ່າງກໍ່ເຕີມນ້ຳມັນ ສົ່ງຂາຍສິນຄ້າ ເພື່ອລາຄາຕ້ອງເຕັ້ອງ ອັດຖຸຂອງຕ່າງແປປ່ຽນ **ລາຄາເອີ!** ອຸກໃຈຍາມຈ່າຍຊື້ ເງິນໃຊ້ຊີບ່ພໍ **ພີ່ນ້ອງເອີ!**

❋ ສະແດງຄວາມຍິນດີນຳ**ປີນແກ້ວ ຄູນສະຫວັດ** ກ່ານາທີການອັດຫະນະຫ່າ-ສັງຄົມ ສະພາແຫ່ງຊາດ ທີ່ໄດ້ປະກາດກ້ອງ**ແຕ່ງດອງ**ມ**ີພັນລະຍາ**ໃບຕົ້ນເດືອນກຸມພາ ບັດນີ້ມີຄູ່ຊ້ອນ ນິບອນດ່ຽວ ດຽວດາຍ **ແລ້ວບໍ່!** ຂໍ່ໃຫ້ມີຄວາມສຸກ ຢູ່ຄູ່ກັນຈົນເຖົ້າ ຂໍ່ໃຫ້ມີລູກເຕົ້າ ຫລານເຫລັ້ນລົ້ນອົ່ງ ຕະກຸນເນີ! ເປັນໂພໄຊຮົ່ມແກ້ວ ໃຫ້ເຂົ້າໄດ້ເພິ່ງອີງ **ນັ້ນຕ້ອນ!**

❋ **ລັບລາ**ເລນຫາຍກາຍຜ່ານພົ້ນ **14 ກຸມພາ** ຂ່າວ່າເປັນລັບດີ ຮັກຫວມຫວານຊົ້ງ ຈົບຈາກໄປເສັດສິ້ນ ຍິ້ນຫລາຍຄົນຂານ ກ່າວ ວ່າຫົ່ງເນົ້າເນື່ອຍນ້ອຍ ສະຫລອງຫລິ້ນນ່ອນນັ້ນ ບາງຄົນນັ້ນ ໄດ້ດອກຫລວງຫລາຍ ກຸຫລາບລັບລາເລນຫາຍ ຊົ່ນໃຈ ສະ ອວນໃອ້ ບາງຄົນໃຊ້ຊຶ້ນເສ້ຳ ຫ່ວຍເຫງ້ານບ່ໄດ້ດອກ **(ເພີ່ນຈົ່ມ)** ເພາະວ່າຄວາມຮັກຮ້າງ ໄກຂ້າງທ່ານລາ **(ອີຕົ້ນເດ)** ຄັນບ່ານ່ານ ໃຈ ແທ້ ຢ່ານ່ານ່ານ ຂ້ານ ຂ້ານ ຂ້

ກົດໝາຍ ວ່າດ້ວຍການໃຫ້ວັກຊີນກັນພະຍາດ

ຕໍ່ຈາກສະບັບກ່ອນ...

ມາດຕາ 73 ຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ

ຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ ແມ່ນ ການຈັດຕັ້ງຂອງລັດທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ລັດຖະມົນຕີກະຊວງສາທາລະນະສຸກ, ມີພາລະບົດບາດໃນການຄົ້ນຄວ້າ ແລະ ໃຫ້ຄຳປຶກສາດ້ານວິຊາການ ກ່ຽວກັບການໃຫ້ວັກຊີນກັນພະຍາດ.

ໂຄງປະກອບການຈັດຕັ້ງ, ການເຄື່ອນໄຫວ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 74 ຄະນະກຳມະການກວດກາເຫດການປະຕິປັກ ທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ

ຄະນະກຳມະການກວດກາເຫດການປະຕິປັກ ທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ ແມ່ນ ການຈັດຕັ້ງຂອງລັດທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍລັດຖະ ມົນຕີກະຊວງສາທາລະນະສຸກ ມີພາລະບົດບາດໃນການຕິດຕາມ, ກວດກາ, ສືບຄົ້ນຫາສາເຫດ, ວິເຄາະ, ວິໄຈ ເພື່ອບົ່ງມະຕິ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ເພື່ອນຳໃຊ້ມາດຕະການແກ້ໄຂຢ່າງທັນການ.

ໂຄງປະກອບການຈັດຕັ້ງ, ການເຄື່ອນໄຫວ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາເຫດການປະຕິປັກ ທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ພາກທີ X
ການຄຸ້ມຄອງ ແລະ ກວດກາການໃຫ້ວັກຊີນກັນພະຍາດ
ໝວດທີ 1
ການຄຸ້ມຄອງການໃຫ້ວັກຊີນກັນພະຍາດ

ມາດຕາ 75 ອົງການຄຸ້ມຄອງ

ລັດຖະບານ ເປັນຜູ້ຄຸ້ມຄອງການໃຫ້ວັກຊີນກັນພະຍາດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການ ແລະ ຮັບຜິດຊອບໂດຍກົງ ໃນການປະ ສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;
3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ;
4. ສຸກສາລາ;
5. ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ.

ມາດຕາ 76 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການໃຫ້ວັກຊີນກັນພະຍາດ ເພື່ອນຳສະເໜີ ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການໃຫ້ວັກຊີນກັນພະ ຍາດ ໃຫ້ເປັນ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ອັນລະອຽດ ແລະ ຈັດຕັ້ງປະຕິບັດ;
3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
4. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມນະ�โยบาย, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
5. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກ່ຽວກັບການໃຫ້ວັກຊີນກັນພະຍາດຕາມສາຍຕັ້ງຂອງຕົນໃນຂອບເຂດທົ່ວປະ ເທດ;
6. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
7. ແຕ່ງຕັ້ງຄະນະກຳມະການ ກວດກາສາເຫດການເກີດກໍລະນີເຫດ ການປະຕິປັກ ຫຼັງການໃຫ້ວັກຊີນກັນພະຍາດ ໂດຍມີການປະສານສົມທົບກັບ ຂະແໜງການອື່ນທີ່ກ່ຽວຂ້ອງ;
8. ສ້າງ, ພັດທະນາ ແລະ ຄຸ້ມຄອງ ສະຖານທີ່ເກັບຮັກສາວັກຊີນກັນ ພະຍາດ ເປັນຕົ້ນ ສາງ, ຫ້ອງເຢັນ,ຫ້ອງແຊ່ແຂງ;
9. ສ້າງ ແລະ ອອກ ຄຳແນະນຳ, ຄູ່ມື ແລະ ຂັ້ນຕອນປະຕິບັດການໃຫ້ ວັກຊີນກັນພະຍາດ;
10. ກຳນົດບັນຊີພະຍາດທີ່ສາມາດກັນໄດ້ດ້ວຍວັກຊີນກັນພະຍາດ;
11. ກຳນົດບັນຊີຊະນິດຂອງວັກຊີນກັນພະຍາດທີ່ນຳໃຊ້ ຢູ່ ສປປລາວ ໃນແຕ່ລະໄລຍະ;
12. ສ້າງ, ປັບປຸງ ແລະ ຂະຫຍາຍ ຕາໜ່າງການໃຫ້ບໍລິການວັກຊີນ ກັນພະຍາດ ແລະ ລະບົບຖານຂໍ້ມູນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
13. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການໃຫ້ວັກຊີນກັນພະຍາດຕົນອອກ ແລະ ຂອງຂັ້ນລຸ່ມ ທີ່ຂັດກັບກົດ ໝາຍ;
14. ສະເໜີ ພາກສ່ວນທີ່ກ່ຽວຂ້ອງ ອອກຄຳສັ່ງ ໂຈະ ຫຼື ຍົກເລີກການ ດຳເນີນທຸລະກິດທີ່ບໍ່ຖືກຕ້ອງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
15. ອອກໃບຢັ້ງຢືນ ກ່ຽວກັບການປະກອບວິຊາຊີບ ແລະ ການປະຕິ ບັດວຽກງານຕົວຈິງ ໃນການໃຫ້ວັກຊີນກັນພະຍາດ;
16. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີ, ຄຳຮ້ອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
17. ອອກ, ໂຈະ, ຖອນ ໃບອະນຸຍາດດ້ານວິຊາການ ກ່ຽວກັບການໃຫ້ ວັກຊີນກັນພະຍາດ;
18. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
19. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການໃຫ້ວັກຊີນກັນພະ ຍາດ;
20. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ ໃຫ້ລັດຖະບານຢ່າງເປັນປົກກະຕິ;
21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 77 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ຈັດຕັ້ງ, ປະຕິບັດ ນະ�โยบาย, ແຜນຍຸດທະສາດ, ກົດໝາຍ, ແຜນ ການ, ແຜນງານ ແລະ ໂຄງ ການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະ�โยบาย, ແຜນຍຸດທະ ສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ການໃຫ້ວັກຊີນກັນພະຍາດ;
3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການ ໃຫ້ວັກຊີນກັນພະຍາດ;
4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ການໃຫ້ວັກຊີນກັນພະຍາດ;
5. ສົ່ງເສີມ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
6. ພັດທະນາ ແລະ ຄຸ້ມຄອງ ສະຖານທີ່ເກັບຮັກສາວັກຊີນກັນພະຍາດ ເປັນຕົ້ນ ສາງ, ຫ້ອງເຢັນ, ຫ້ອງແຊ່ແຂງ;
7. ເກັບກຳ, ວິເຄາະ ຂໍ້ມູນ ແລະ ວິເຄາະຄວາມສ່ຽງ ກ່ຽວກັບການໃຫ້ວັກ ຊີນກັນພະຍາດ;
8. ກຳນົດກຸ່ມເປົ້າໝາຍ ແລະ ເຂດບໍລິການ ໃຫ້ວັກຊີນກັນພະຍາດ;
9. ປະຕິບັດ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງຂັ້ນ ເທິງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
10. ສ້າງ, ປັບປຸງ ແລະ ຂະຫຍາຍ ຕາໜ່າງລະບົບຖານຂໍ້ມູນ ກ່ຽວກັບ ການໃຫ້ວັກຊີນກັນພະຍາດ;
11. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ທີ່ບໍ່ຖືກຕ້ອງຂອງຂັ້ນເມືອງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
12. ສະເໜີ ຂັ້ນເທິງ ອອກຄຳສັ່ງ ໂຈະ ຫຼື ຍົກເລີກ ການດຳເນີນທຸລະ ກິດກ່ຽວກັບການໃຫ້ວັກຊີນກັນພະຍາດທີ່ບໍ່ຖືກຕ້ອງ;
13. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີ, ຄຳຮ້ອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
14. ປະສານສົມທົບກັບ ພະແນກການ, ອົງການລັດທຽບເທົ່າພະແນກ ຂັ້ນແຂວງ ແລະ ພາກສ່ວນອື່ນກ່ຽວກັບການໃຫ້ວັກຊີນກັນພະຍາດ;
15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບການໃຫ້ວັກຊີນ ກັນພະຍາດ ຕາມການມອບໝາຍ;
16. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະ ຍາດ ໃຫ້ກະຊວງສາທາລະນະສຸກ, ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງ ເປັນປົກກະຕິ;
17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 78 ສິດ ແລະ ໜ້າທີ່ ຂອງຫ້ອງການ ສາທາລະນະສຸກ ເມືອງ, ເທດ ສະບານ, ນະຄອນ

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດ ຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະ�โยบาย, ແຜນຍຸດທະສາດ, ກົດໝາຍ, ລະບຽບ ການ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບການໃຫ້ວັກຊີນກັນພະຍາດ;
2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະ�โยบาย, ແຜນຍຸດທະ ສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ການໃຫ້ວັກຊີນກັນພະຍາດ;
3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການ ໃຫ້ ວັກຊີນກັນພະຍາດ;
4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ການໃຫ້ວັກຊີນກັນພະຍາດ;
5. ສົ່ງເສີມ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
6. ເກັບກຳ, ວິເຄາະ ຂໍ້ມູນ ແລະ ວິເຄາະຄວາມສ່ຽງ ກ່ຽວກັບການ ໃຫ້ ວັກ ຊີ ນ ກັ ນ ພະ ຍາດ;
7. ກຳນົດກຸ່ມເປົ້າໝາຍ ແລະ ເຂດບໍລິການ ໃຫ້ວັກ ຊີ ນ ກັ ນ ພະ ຍາດ;
8. ປະ ຕິ ບັ ດ ຂໍ້ ຕົ ກ ລົ ງ, ຄຳ ສັ ່ ງ, ຄຳ ແນ ະ ນຳ ແ ລ ະ ແ ຈ້ ງ ການ ຂ ອ ງ ຂັ ້ ນ ເ ທິ ງ ກ ່ ຽ ວ ກ ັ ບ ການ ໃ ຫ ້ ວ ັ ກ ຊ ີ ນ ກ ັ ນ ພ ະ ຍ າ ດ;
9. ສ້ າ ງ, ປ ັ ບ ປ ຸ ງ ແ ລ ະ ຂ ະ ຫ ຍ າ ຍ ຕ າ ໜ ່ າ ງ ລ ະ ບ ົ ບ ຖ ານ ຂ ໍ ້ ມ ູ ນ ກ ່ ຽ ວ ກ ັ ບ ການ ໃ ຫ ້ ວ ັ ກ ຊ ີ ນ ກ ັ ນ ພ ະ ຍ າ ດ;
10. ສ ະ ເ ໜ ີ ຂ ັ ້ ນ ເ ທ ິ ງ ອ ອ ກ ຄ ຳ ສ ັ ່ ງ ໂ ຈ ະ ຫ ຼ ື ຍ ົ ກ ເ ລ ີ ກ ການ ດ ຳ ເ ນ ີ ນ ທ ຸ ລ ະ ກ ິ ດ ກ ່ ຽ ວ ກ ັ ບ ການ ໃ ຫ ້ ວ ັ ກ ຊ ີ ນ ກ ັ ນ ພ ະ ຍ າ ດ ທ ີ ່ ບ ໍ ່ ຖ ືກ ຕ ້ ອ ງ;
11. ຮ ັ ບ ແ ລ ະ ພ ິ ຈ າ ລ ະ ນ າ ແ ກ ້ ໄ ຂ ຄ ຳ ສ ະ ເ ໜ ີ, ຄ ຳ ຮ ້ ອ ງ ຂ ອ ງ ບ ຸ ກ ຄ ົ ນ, ນ ິ ຕ ິ ບ ຸ ກ ຄ ົ ນ ຫ ຼ ື ການ ຈ ັ ດ ຕ ັ ້ ງ ກ ່ ຽ ວ ກ ັ ບ ການ ໃ ຫ ້ ວ ັ ກ ຊ ີ ນ ກ ັ ນ ພ ະ ຍ າ ດ;
14. ປ ະ ສ ານ ສ ົ ມ ທ ົ ບ ກ ັ ບ ພ ະ ແ ນ ກ ການ, ອ ົ ງ ການ ລ ັ ດ ທ ຽ ບ ເ ທ ົ່ າ ພ ະ ແ ນ ກ ຂ ັ ້ ນ ແ ຂ ວ ງ ແ ລ ະ ພ າ ກ ສ ່ ວ ນ ອ ື ່ ນ ກ ່ ຽ ວ ກ ັ ບ ການ ໃ ຫ ້ ວ ັ ກ ຊ ີ ນ ກ ັ ນ ພ ະ ຍ າ ດ;
15. ພ ົ ວ ພ ັ ນ ແ ລ ະ ຮ ່ ວ ມ ມ ື ກ ັ ບ ຕ ່ າ ງ ປ ະ ເ ທ ດ ກ ່ ຽ ວ ກ ັ ບ ການ ໃ ຫ ້ ວ ັ ກ ຊ ີ ນ ກ ັ ນ ພ ະ ຍ າ ດ ຕ າ ມ ການ ມ ອ ບ ໝ າ ຍ;
16. ສ ະ ຫ ຼ ຸ ບ, ລ າ ຍ ງ ານ ການ ຈ ັ ດ ຕ ັ ້ ງ ປ ະ ຕ ິ ບ ັ ດ ການ ໃ ຫ ້ ວ ັ ກ ຊ ີ ນ ກ ັ ນ ພ ະ ຍ າ ດ ໃ ຫ ້ ກ ະ ຊ ວ ງ ສ າ ທ າ ລ ະ ນ ະ ສ ຸ ກ, ອ ົ ງ ການ ປ ົ ກ ຄ ອ ງ ແ ຂ ວ ງ, ນ ະ ຄ ອ ນ ຫ ຼ ວ ງ ຢ ່ າ ງ ເ ປ ັ ນ ປ ົ ກ ກ ະ ຕ ິ;
17. ນ ຳ ໃ ຊ ້ ສ ິ ດ ແ ລ ະ ປ ະ ຕ ິ ບ ັ ດ ໜ ້ າ ທ ີ ່ ອ ື ່ ນ ຕ າ ມ ທ ີ ່ ໄ ດ ້ ກ ຳ ນ ົ ດ ໄ ວ ້ ໃ ນ ກ ົ ດ ໝ າ ຍ.

ມາດຕາ 79 ສິດ ແລະ ໜ້າທີ່ ຂອງສຸກສາລາ

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ສຸກສາລາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບ ຜິດຊອບຂອງຕົນ ດັ່ງນີ້:

1. ເປັນເຈົ້າການ ແລະ ເຂົ້າຮ່ວມການໃຫ້ວັກຊີນກັນພະຍາດ;
2. ເຜີຍແຜ່ຂໍ້ມູນ ຂ່າວສານ ກ່ຽວກັບການໃຫ້ວັກຊີນກັນພະຍາດ ໃຫ້ ປະຊາຊົນເຂົ້າໃຈ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ;
3. ສ້າງແຜນຈຸລະພາກດ້ວຍການມີສ່ວນຮ່ວມຂອງຊຸມຊົນເພື່ອເຂົ້າເຖິງ ກຸ່ມເປົ້າໝາຍ;
4. ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບກຸ່ມເປົ້າໝາຍ, ຜູ້ພາດໂອກາດ ໃນ ການຮັບວັກຊີນກັນພະຍາດ ແລ້ວລາຍງານໃຫ້

ອ່ານຕໍ່ສະບັບຫນ້າ...

ເຂົ້າໃຈກົດໝາຍ

ຄັດໂດຍ: ສ.ສາຍນ້ຳທາ

ກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ

1. ເຊື້ອຈຸລິນຊີ ແລະ ເຊື້ອຈຸລະໂຣກ ໝາຍເຖິງສິ່ງທີ່ມີຊີວິດ ນ້ອຍໆ ທີ່ບໍ່ສາມາດເຫັນດ້ວຍຕາເປົ່າ ເຊິ່ງກໍ່ໃຫ້ເກີດ ຫລື ບໍ່ກໍ່ໃຫ້ເກີດພະ ຍາດ ໃນຮ່າງກາຍຂອງຄົນເຮົາ;

2. ນ້ຳລະລາຍ ໝາຍເຖິງທາດແຫລວຊະນິດໜຶ່ງທີ່ມີຄວາມເຂັ້ມ ຂຸ້ນສະເພາະ ເຊິ່ງນຳໃຊ້ປະສົມກັບວັກຊີນກັນພະຍາດຊະນິດເປັນຝຸ່ນ ຫລື ກ້ອນ;

3. ອຸປະກອນການເກັບຮັກສາວັກຊີນກັນພະຍາດ ໝາຍເຖິງຕູ້ ເຢັນ, ຕູ້ແຊ່ແຂງ, ຫີບເຢັນ, ຖົງພາຍວັກຊີນ ຫລື ອຸປະກອນອື່ນທີ່ໃຊ້ສະ ເພາະ ເຊິ່ງປະກອບເປັນຕ່ອງໂສ້ຄວາມເຢັນ ເພື່ອເກັບຮັກສາວັກຊີນກັນ ພະຍາດ.

ອ່ານຕໍ່ສະບັບໜ້າ

ຊີເລ ປະກາດໃຊ້ກົດໝາຍຫ້າມໃຊ້ ພາລາສະຕິກໃຊ້ໄດ້ຄັ້ງດຽວ

 # ນາງ ປາກາລັກ ພົມມີໄຊ

ອີງຕາມການລາຍງານຂ່າວ ໃນວັນທີ 13 ກຸມພາ 2022 ໃຫ້ຮູ້ວ່າ: ອຳນາດການປົກຄອງປະເທດຊີເລ ເຊິ່ງເປັນປະເທດໃນພາກຕາເວັນຕົກຂອງອາເມລິກາໃຕ້ ໄດ້ປະກາດບັງຄັບໃຊ້ກົດໝາຍສະບັບໃໝ່ ຫ້າມໃຊ້ພາລາສະຕິກທີ່ໃຊ້ຄັ້ງດຽວແລ້ວຖິ້ມ ໂດຍມີຜົນບັງຄັບໃຊ້ໃນທົ່ວປະເທດ ນັບແຕ່ວັນທີ 13 ກຸມພານີ້ເປັນຕົ້ນໄປ.

ຮອງລັດຖະມົນຕີກະຊວງສິ່ງແວດລ້ອມຈີຊີເລ ໄດ້ເປີດເຜີຍໃຫ້ຮູ້ວ່າ: ກົດໝາຍສະບັບນີ້ ກໍເພື່ອເປັນການຫລຸດຜ່ອນປະລິມານຂີ້ເຫຍື້ອພາລາສະຕິກລົງ. ພ້ອມດຽວກັນນີ້, ກົດໝາຍດັ່ງກ່າວ ໄດ້ບັງຄັບໃຫ້ຮ້ານອາຫານໃນທົ່ວປະເທດ ມີໄລຍະເວລາ 3 ປີ ໃນການປ່ຽນສິ່ງຂອງໃສ່ອາຫານຈາກພາລາສະຕິກ ໃຫ້ເປັນວັດສະດຸທີ່ສາມາດຍ່ອຍສະຫລາຍໄດ້.

ຂໍ້ມູນຈາກທະນາຄານໂລກ ໃນປີ 2018 ລະບຸວ່າ: ຊີເລເປັນປະເທດທີ່ມີການຜະລິດຂີ້ເຫຍື້ອຈາກພາລາສະຕິກຫລາຍທີ່ສຸດເປັນອັນດັບ 2 ຂອງອາເມລິກາໃຕ້ ຖັດຈາກເມັກຊິກ.

ປັດຈຸບັນໃນທົ່ວໂລກ ມີບັນຫາຂີ້ເຫຍື້ອພາລາສະຕິກ ແລະ ຫລາຍປະເທດແມ່ນມີຄວາມຕື່ນຕົວໃນການແກ້ໄຂບັນຫາດັ່ງກ່າວ ໂດຍໄດ້ອອກມາດຕະການໃນຫລາຍຮູບແບບ ເຊັ່ນ: ອິນເດຍ ໄດ້ໃຫ້ຄຳໝັ້ນສັນຍາຢຸດການໃຊ້ພາລາສະຕິກທີ່ໃຊ້ຄັ້ງດຽວ, ໄຕ້ຫວັນ ຂະຫຍາຍມາດຕະການຫ້າມການນຳໃຊ້ພາລາສະຕິກທີ່ມີຄວາມໜາໜ້ອຍ ເນື່ອງຈາກວ່າໃຊ້ຄັ້ງດຽວແລ້ວຕ້ອງຖິ້ມ ແລະ ປະເທດອື່ນໆ.

ແຫລ່ງຂ່າວ: www.sabcnews.com

ລັດເຊຍ ກຳລັງຈະຮັບຮອງຊັບສິນດິຈິຕອນ ເປັນສະກຸນເງິນຖືກຕ້ອງຕາມກົດໝາຍ

 # ນາກ ເມືອງມະໂນ

ອີງຕາມການລາຍງານຂ່າວ ເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ: ທະນາຄານກາງຂອງລັດເຊຍ ກຽມຍັ່ງຍືນສະກຸນເງິນດິຈິຕອນ ເປັນເງິນທີ່ຖືກຕ້ອງຕາມກົດໝາຍ ສາມາດຊື້ສິນຄ້າ ຫລື ຊຳລະຄ່າບໍລິການ ແຕ່ຕ້ອງຜ່ານທະນາຄານ ຫລື ອົງການທີ່ມີໃບອະນຸຍາດຢ່າງຖືກຕ້ອງເທົ່ານັ້ນ.

ສະກຸນເງິນດິຈິຕອນ ຫລື ຊັບສິນດິຈິຕອນ ທີ່ຖືກສ້າງຂຶ້ນເພື່ອຂາຍຜະລິດຕະພັນແທນທີ່ຈະເປັນສະກຸນເງິນໃນປັດຈຸບັນ ໂດຍບໍ່ຜ່ານທະນາຄານກາງຂອງແຕ່ລະປະເທດ ຫລື ອົງການທີ່ກ່ຽວຂ້ອງ ເຮັດໃຫ້ຍາກທີ່ຈະຄວບຄຸມ ດັ່ງນັ້ນ, ບໍ່ຄ່ອຍໄດ້ຮັບການຍອມຮັບໃນຫລາຍປະເທດ ແຕ່ບໍ່ແມ່ນທັງໝົດ ເນື່ອງຈາກວ່າມີບາງປະເທດ ເຊັ່ນ ແອນຊານວາດໍ ທີ່ຍອມຮັບບິດຄອຍ ເປັນສະກຸນເງິນທີ່ຊຳລະໜີ້ໄດ້ຕາມກົດໝາຍເປັນປະເທດທຳອິດໃນໂລກ.

ຫລ້າສຸດປະເທດລັດເຊຍ ກຳລັງຈະຮັບຮອງສະກຸນເງິນດິຈິຕອນເປັນສະກຸນເງິນທີ່ຖືກຕ້ອງຕາມກົດໝາຍ ໂດຍທະນາຄານກາງລັດເຊຍໄດ້ອອກຖະແຫລງການໃນຕອນກາງຄືນວັນທີ 8 ເດືອນກຸມພາຜ່ານມາ (ຕາມເວລາທ້ອງຖິ່ນ) ໂດຍກ່າວວ່າ: ຂໍ້ຕົກລົງກັບລັດຖະບານລັດເຊຍໄດ້ບັນລຸແລ້ວ ຄາດວ່າຈະມີການປະກາດຢ່າງເປັນທາງການໃນວັນທີ 18 ກຸມພານີ້.

ໜັງສືພິມທ້ອງຖິ່ນຂອງລັດເຊຍສຳນັກໜຶ່ງ ໄດ້ລາຍງານວ່າ: ພາຍຫລັງຮ່າງກົດໝາຍດັ່ງກ່າວຜ່ານແລ້ວ, ສະກຸນເງິນດິຈິຕອນ ຈະໄດ້ຮັບການຮັບຮອງຢ່າງເປັນທາງການ ສາມາດໃຊ້ເພື່ອຊຳລະສິນຄ້າ ຫລື ຈ່າຍຄ່າບໍລິການ ເຊັ່ນດຽວກັນກັບສະກຸນເງິນປົກກະຕິ ແລະ ບໍ່ແມ່ນພຽງແຕ່ຊັບສິນທາງດ້ານການເງິນດິຈິຕອນອີກຕໍ່ໄປ.

ແຫລ່ງຂ່າວ: cnbctv18

ບໍ່ໄດ້ຮັບຫນັງສືພິມໂທ: +856 (21) 454563, ຕ້ອງການແຈ້ງຂ່າວໂທ: +856 (21) 413522
ອອກແບບ-ຈັດຫນ້າໂດຍ: ນາງ ກຸກກິກ ບຸດດາໄຊ ແລະ ນາງ ນິດຕາ ຄຸນປາກດີ